**ຄຳຖະແຫຼງວ່າດ້ວຍພາລະກິດ**

ພວກເຮົາປະຕິບັດຕາມຫຼັກການດ້ານຄວາມຍຸຕິທຳ ແລະ ຄວາມໂປ່ງໃສໃນການວ່າຈ້າງແຮງງານສາກົນທີ່ມີສີມືໃຫ້ແກ່ນາຍຈ້າງເຢຍລະມັນໃນຂະແໜງການສາທາລະນະສຸກ ແລະ ການສຶກສາ.

ພວກເຮົາຕະນັກເຖິງຄວາມຮັບຜິດຊອບຕໍ່ສັງຄົມທີ່ສຳຄັນຂອງວຽກງານຂອງພວກເຮົາ ທີ່ມີຕໍ່ທັງປະເທດວ່າຈ້າງງານ ແລະ ປະເທດກຳເນີດຂອງຜູ້ຊ່ຽວຊານ ແລະ ໂດຍສະເພາະທີ່ມີຕໍ່ຜູ້ຊ່ຽວຊານເອງ. ດ້ວຍເຫດນີ້, ພວກເຮົາຈຶ່ງປະຕິຍານວ່າຜູ້ຊ່ຽວຊານຈະບໍ່ໄດ້ຈ່າຍເງິນເພື່ອທີ່ຈະໄດ້ວຽກຢູ່ເຢຍລະມັນ (ນະໂຍບາຍວ່າດ້ວຍການ "ບໍ່ມີຄ່າທຳນຽມ" ແລະ/ຫຼື ຫຼັກການທີ່ໃຫ້ "ນາຍຈ້າງຈ່າຍ").

ໃນທຸກການດຳເນີນງານ, TalentOrange ນຳໃຊ້ມາດຕະຖານທາງດ້ານຈັນຍາບັນ ແລະ ວິຊາຊີບຂອງ ເຄື່ອງໝາຍດ້ານຄຸນນະພາບສຳລັບ "ການວ່າຈ້າງທີ່ຍຸຕິທຳໃນຂະແໜງສາທາລະນະສຸກຂອງເຢຍລະມັນ" ແລະ ກຳນົດໃຫ້ຄູ່ຮ່ວມດຳເນີນທຸລະກິດຂອງຕົນເຮັດຄືກັນ.

ກົດຈັນຍາບັນຂອງພວກເຮົາແມ່ນອີງຕາມ " ກົດຈັນຍາບັນສຳລັບການວ່າຈ້າງບຸກຄະລາກອນສາທາລະນະສຸກສາກົນຂອງ WHO". ນີ້ແມ່ນຄຳແນະນຳຫຼັກສຳລັບການຮ່ວມມືແບບຍືນຍົງລະຫວ່າງ TalentOrange, ຜູ້ຊ່ຽວຊານ ແລະ ນາຍຈ້າງ.

ເປົ້າໝາຍຂອງກົດແມ່ນເພື່ອຮອງຮັບສິດຜົນປະໂຫຍດຂອງຜູ້ມີສ່ວນຮ່ວມທຸກພາກສ່ວນໃນລັກສະນະທີ່ຍຸຕິທຳ. TalentOrange ວ່າຈ້າງບຸກຄະລາກອນສາທາລະນະສຸກເທົ່ານັ້ນຈາກບັນດາປະເທດທີ່ WHO ພິຈາລະນາວ່າມີຜູ້ຊ່ຽວຊານທີ່ພຽງພໍໃນຂະແໜງການແພດສຳລັບຄວາມຕ້ອງການຂອງເຂົາເຈົ້າເອງ, ເຊັ່ນ: ຄວາມຕ້ອງການທີ່ບໍ່ໄດ້ຢູ່ໃນ "ບັນຊີການຊ່ວຍເຫຼືອ ແລະ ການປົກປ້ອງແຮງງານສາທາລະນະສຸກຂອງ WHO".

ນອກຈາກນັ້ນ, ພວກເຮົາປະຕິຍານທີ່ຈະຍຶກສູງຂໍ້ຕົກລົງສາກົນວ່າດ້ວຍສິດທິມະນຸດ, ໂດຍສະເພາະແມ່ນ ຂໍ້ຕົກລົງເອີຣົບວ່າດ້ວຍສິດທິມະນຸດ. TalentOrange ປະຕິຍານທີ່ຈະຍຶກສູງ ຫຼັກການພື້ນຖານຢູ່ບ່ອນເຮັດວຽກຂອງ ILO ແລະ ມາດຕະຖານ IRIS ຂອງອົງການລະຫວ່າງປະເທດເພື່ອການຍົກຍ້າຍຖິ່ນຖານ (International Organization for Migration).

ສິ່ງເຫຼົ່ານີ້ປະກອບເປັນຫຼັກການທີ່ສຳຄັນທີ່ສຸດທີ່ພວກເຮົາປະຕິບັດໃນເວລາວ່າຈ້າງພະນັກງານຈາກຕ່າງປະເທດ:

- ເຄົາລົບກົດໝາຍຂອງທຸກປະເທດທີ່ກ່ຽວຂ້ອງ, ລວມທັງສົນທິສັນຍາແບບທະວິພາຄີ ແລະ ນິຕິກຳກ່ຽວກັບການວ່າຈ້າງ ແລະ ການຍົກຍ້າຍຖິ່ນຖານທີ່ມີຜົນນຳໃຊ້
- ຫ້າມບໍ່ໃຫ້ມີການເກັບຄ່າທຳນຽມ ຫຼື ເງິນມັດຈຳສຳລັບການວ່າຈ້າງ (ຫຼັກການທີ່ໃຫ້ "ນາຍຈ້າງຈ່າຍ")
- ເຮັດການກະກຽມຢ່າງຮອບດ້ານສຳລັບການປັບໂຕເຂົ້າໃນບ່ອນເຮັດວຽກໃໝ່;

ສິ່ງດັ່ງກ່າວນີ້ປະກອບມີການກະກຽມດ້ານຄວາມແຕກຕ່າງລະຫວ່າງວັດທະນະທຳຂອງສະຖາບັນເຮັດວຽກ, ເຊິ່ງຈະຕ້ອງໄດ້ສ້າງຂະບວນການປັບໂຕ ແລະ ມີວັດທະນະທຳໃນການຕ້ອນຮັບ

- ຄວາມໂປ່ງໃສ່ໃນດ້ານເງື່ອນໄຂຂອງການວ່າຈ້າງ ແລະ ການຈ້າງງານ ເພື່ອວ່າຜູ້ຊ່ຽວຊານຈະສາມາດເຮັດການຕັດສິນໃຈທີ່ຮອບຄອບຢ່າງເໝາະສົມ

TALENTorange

NÄHER DRAN: FACHKRÄFTE WELTWEIT

- ການວ່າຈ້າງເຂົ້າບ່ອນເຮັດວຽກທີ່ຮັບປະກັນສະພາບການເຮັດວຽກ, ສິດ ແລະ ພັນທະດຽວກັນສໍາລັບພະນັກງານພາຍໃນ ແລະ ຕ່າງປະເທດ (ການຕ້ານການເລືອກປະຕິບັດ)
- ໃຫ້ຄວາມຊ່ວຍເຫຼືອທີ່ເໝາະສົມແກ່ພະນັກງານ ໃນການເຮັດໃຫ້ມີການຍອມຮັບດ້ານຄຸນວຸດທິທີ່ໄດ້ມາຈາກຕ່າງປະເທດ, ການໄດ້ຮັບໃບອະນຸຍາດພັກເຊົາ ແລະ ການຮຽນຮູ້ພາສາ
- ການປະຕິບັດດ້ານຈັນຍາບັນ ແລະ ດ້ານວິຊາຊີບ
- ຂໍ້ຕົກລົງທາງດ້ານສັນຍາສໍາລັບການວ່າຈ້າງຈະບໍ່ມີຂໍ້ກໍານົດໃນການຊົດເຊີຍເງິນຄືນ ຫຼື ຂໍ້ຜູກພັນ ຫຼື ຈະຕ້ອງເປັນໄປຕາມເງື່ອນໄຂຂອງເຄື່ອງໝາຍດ້ານຄຸນນະພາບສໍາລັບ " ການວ່າຈ້າງທີ່ຍຸຕິທໍາໃນຂະແໜງສາທາລະນະສຸກຂອງເຢຍລະມັນ"
- ປົກປ້ອງຄວາມລັບ ແລະ ຂໍ້ມູນ
- ຮັບປະກັນຂັ້ນຕອນໃນການຮ້ອງທຸກ
- ຮັບປະກັນການເຂົ້າເຖິງການຊົດເຊີຍທາງດ້ານກົດໝາຍ

ພະນັກງານ ຫຼື ຄູ່ຮ່ວມດໍາເນີນທຸລະກິດທີ່ລະເມີດກົດລະບຽບເຫຼົ່ານີ້ຈະຖືກດໍາເນີນມາດຕະການທາງວິໄນທີ່ເໝາະສົມ. ສິ່ງດັ່ງກ່າວນີ້ອາດຈະມີການຍົກເລີກສັນຍາ ແລະ ການລາຍງານກ່ຽວກັບການປະພຶດທີ່ບໍ່ຖືກຕ້ອງຕໍ່ອໍານາດການປົກຄອງທີ່ກ່ຽວຂ້ອງ.